ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 02/ປປ

ລົງວັນທີ--------

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ວ່າດ້ວຍທະນາຄານທຸລະກິດ ສະບັບປັບປຸງ

- ອີງຕາມລັດຖະທຳມະນູນແຫ່ງ ສປປລາວ ໝວດທີ 5 ມາດຕາ 53 ຂໍ້ 2 ;
- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ສະບັບດັດແກ້ ເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999 ;
- ອີງຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງ ຊາດ ລົງວັນທີ 17 ກຸມພາ 2000 .

ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດກ່ຽວກັບການປັບປຸງລັດຖະບັນຍັດວ່າດ້ວຍທະນາຄານທຸລະກິດ ລັດຖະບັນຍັດສະບັບນີ້ໄດ້ປ່ຽນແປງ ແລະ ເພີ່ມເຕີມບາງມາດຕາ ຂອງລັດຖະບັນຍັດດັ່ງນີ້ :

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 : ໜ້າທີ່ ຂອງລັດຖະບັນຍັດວ່າດ້ວຍທະນາຄານທຸລະກິດ .**

ລັດຖະບັນຍັດວ່າດ້ວຍທະນາຄານທຸລະກິດມີໜ້າທີ່ກຳນົດທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານທຸລະກິດແນໃສ່ຮັບປະກັນການປະຕິບັດນະໂຍບາຍທາງດ້ານເງິນຕາ, ຕອບສະໜອງທຶນໃຫ້ແກ່ການຜະລິດ ແລະ ການບໍລິການ, ດັດສົມບໍລິມາດເງິນຕາຢູ່ໃນສັງຄົມ, ພົວພັນທາງດ້ານເງິນຕາຕ່າງປະເທດກັບສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມ ຂອງ ສປປ ລາວ .

**ມາດຕາ 2 ໃໝ່. ທະນາຄານທຸລະກິດ .**

ທະນາຄານທຸລະກິດ ແມ່ນສະຖາບັນການເງິນ ທີ່ດຳເນີນທຸລະກິດການທະນາຄານ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານ ແຫ່ງ ສປປ ລາວ, ປະກອບດ້ວຍ ທະນາຄານທຸລະກິດທົ່ວໄປ ແລະ ທະນາຄານທຸລະກິດສະເພາະ .

ທະນາຄານທຸລະກິດທົ່ວໄປ ແມ່ນສະຖາບັນການເງິນທີ່ເປັນນິຕິບຸກຄົນຊຶ່ງດຳເນີນທຸລະກິດກ່ຽວກັບການຮັບຝາກເງິນ, ການໃຫ້ກູ້ຢືມ, ການຊື້-ຂາຍເງິນຕາຕ່າງປະເທດ, ການລົງທຶນກ່ຽວກັບໃບຢັ້ງຢືນການຄ້າ ແລະ ເອກະສານທີ່ມີຄ່າຄືເງິນ , ການບໍລິການດ້ານການເງິນຢູ່ພາຍໃນ ແລະ ຕ່າງປະເທດ.

ທະນາຄານທຸລະກິດສະເພາະ ແມ່ນສະຖາບັນການເງິນ ທີ່ເປັນນິຕິບຸກຄົນຊຶ່ງດຳເນີນທຸລະກິດທີ່ມີລັກສະນະສະເພາະຂະແໜງການ ຫລື ກິດຈະການຂອງຂະແໜງການໃດໜຶ່ງທີ່ໄດ້ກຳນົດໄວ້ໃນວັກສອງເທິງນີ້ເຊັ່ນ : ທະນາຄານພັດທະນາ, ທະນາຄານການລົງທຶນ, ທະນາຄານອອມຊັບ, ທະນາຄານເພື່ອການສົ່ງອອກ ແລະ ນຳເຂົ້າ, ທະນາຄານສົ່ງເສີມກະສິກຳ, ທະນາຄານສົ່ງເສີມອຸດສາຫະກຳ ແລະ ອື່ນໆ.

**ມາດຕາ 3 ໃໝ່. ການເປັນນິຕິບຸກຄົນ**

ທະນາຄານທຸລະກິດເປັນນິຕິບຸກຄົນ, ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ໃນການເຄື່ອນໄຫວຕາມພາລະບົດບາດຂອງຕົນ ເພື່ອແຂ່ງຂັນໃນການບໍລິການລູກຄ້າ ໂດຍຖືກຕ້ອງຕາມກົດໝາຍຂອງສປປ ລາວ.

**ມາດຕາ 4. ສຳນັກງານຕົວແທນ ຫລື ສຳນັກງານຜູ້ຕາງໜ້າ ຂອງທະນາຄານທຸລະກິດ**

ສຳນັກງານຕົວແທນ ຫລື ສຳນັກງານຜູ້ຕາງໜ້າ ຂອງທະນາຄານທຸລະກິດຂອງຕ່າງປະເທດທີ່ໄດ້ຮັບອະນຸຍາດສ້າງຕັ້ງຢູ່ ສປປ ລາວ ມີສິດສະເພາະຕິດຕໍ່ພົວພັນກັບບັນດາທະນາຄານທຸລະກິດ ຫລື ສະຖາບັນການເງິນຂອງຕ່າງປະເທດ ທີ່ຕົນເປັນຕົວແທນເທົ່ານັ້ນ ບໍ່ມີສິດດຳເນີນທຸລະກິດການທະນາຄານ ຫລື ຄ້າຍຄືທຸລະກິດທະນາຄານຢູ່ໃນ ສປປ ລາວ.

## ພາກທີ II
## ທະນາຄານທຸລະກິດ ເອກະຊົນ
### ໝວດທີ I
### ການສ້າງຕັ້ງ, ສິດ ແລະ ໜ້າທີ່ຂອງ ທະນາຄານທຸລະກິດ

**ມາດຕາ 5 ໃໝ່. ການສ້າງຕັ້ງທະນາຄານທຸລະກິດ**

ບຸກຄົນ ແລະນິຕິບຸກຄົນ ທີ່ມີຈຸດປະສົງຢາກສ້າງຕັ້ງທະນາຄານຢູ່ ສປປ ລາວ ຕ້ອງເຮັດຄຳຮ້ອງຍື່ນຕໍ່ທະນາຄານແຫ່ງ ສປປ ລາວ. ຄຳຮ້ອງຂໍສ້າງຕັ້ງທະນາຄານທຸລະກິດນັ້ນ ຕ້ອງປະກອບເອກະສານຢ່າງຄົບຖ້ວນ ຕາມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ສຳລັບບຸກຄົນ ແລະ ນິຕິບຸກຄົນຕ່າງປະເທດນັ້ນ ໃຫ້ຍື່ນຄຳຮ້ອງຂໍສ້າງຕັ້ງທະນາຄານທຸລະກິດຕໍ່ຄະນະຄຸ້ມຄອງການລົງທຶນ ຮ່ວມມືກັບຕ່າງປະເທດ ແລະ ການລົງທຶນພາຍໃນ ຢູ່ ສປປ ລາວ.

**ມາດຕາ 6. ເງື່ອນໄຂການສ້າງຕັ້ງທະນາຄານທຸລະກິດ**

ບຸກຄົນທີ່ຈະໄດ້ຮັບອະນຸຍາດໃຫ້ສ້າງຕັ້ງທະນາຄານທຸລະກິດຢູ່ ສປປ ລາວ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້ :

- ມີທຶນຈົດທະບຽນ ແລະ ທຶນຄ້ຳປະກັນຕາມລະບຽບການທີ່ທາງທະນາຄານ ແຫ່ງ ສປປ ລາວ ວາງອອກ;
- ມີພາຫະນະເຕັກນິກ ແລະ ພະນັກງານວິຊາການດ້ານທະນາຄານໂດຍຖືກຕ້ອງຕາມມາດຕະຖານທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ;
- ໄດ້ຮັບຄວາມເຊື່ອຖືຈາກສັງຄົມ;
- ມີຜູ້ບໍລິຫານງານທີ່ມີຄຸນວຸດທິ, ມີຄວາມສາມາດ ແລະ ມີປະສົບການທາງດ້ານທຸລະກິດການທະນາຄານ.

**ມາດຕາ 7. ການອະນຸມັດສ້າງຕັ້ງ ແລະ ການຂຶ້ນທະບຽນ**

ທະນາຄານ ແຫ່ງ ສປປ ລາວ ຕ້ອງພິຈາລະນາ ແລະ ໃຫ້ຄຳຕອບຕໍ່ຄຳຮ້ອງຂໍສ້າງຕັ້ງທະນາຄານທຸລະກິດພາຍໃນກຳນົດເກົ້າສິບວັນ ນັບແຕ່ມື້ໄດ້ຮັບຄຳຮ້ອງຂໍສ້າງຕັ້ງເປັນຕົ້ນໄປ.

ສຳລັບບຸກຄົນຕ່າງປະເທດທີ່ຂໍສ້າງຕັ້ງທະນາຄານທຸລະກິດຢູ່ ສປປ ລາວ ນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ ສປປ ລາວ.

ພາຍຫລັງທີ່ໄດ້ຮັບການອະນຸມັດສ້າງຕັ້ງຈາກທະນາຄານ ແຫ່ງ ສປປ ລາວ ແລ້ວ ທະນາຄານທຸລະກິດຕ້ອງໄດ້ຂຶ້ນທະບຽນວິສາຫະກິດນຳຂະແໜງການຄ້າ, ຈົດທະບຽນອາກອນນຳຂະແໜງການເງິນ ແລະ ເສຍຄ່າທຳນຽມການອະນຸມັດສ້າງຕັ້ງຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ.

**ມາດຕາ 8 ໃໝ່. ການຂະຫຍາຍສາຂາຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ຊຶ່ງມີສຳນັກງານໃຫຍ່ຕັ້ງຢູ່ ສປປລາວ ສາມາດຂະຫຍາຍສາຂາຢູ່ແຫ່ງໃດກໍ່ໄດ້ໃນ ສປປລາວ ແລະສາມາດຂະຫຍາຍສາຂາຂອງຕົນໄປຕ່າງປະເທດໄດ້ ຕາມການອະນຸມັດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 9 ໃໝ່. ເງື່ອນໄຂຂອງທະນາຄານທຸລະກິດຂອງຕ່າງປະເທດ**

ທະນາຄານ, ສາຂາທະນາຄານ, ສະຖາບັນຕົວແທນທະນາຄານທຸລະກິດຂອງຕ່າງປະເທດ ທີ່ຈະມາຕັ້ງຢູ່ ສປປລາວ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ ແລະອົງການທີ່ມີສິດໜ້າທີ່ດ້ານທະນາຄານຂອງປະເທດຕົນ, ຕ້ອງມີຖານະການເງິນດີ, ໄດ້ຮັບການຮັບຮອງການເຄື່ອນ

ໄຫວທີ່ມີຄຸນນະພາບ, ມີປະສິດທິພາບ ແລະຢູ່ພາຍໃຕ້ການຄຸ້ມຄອງຂອງອົງການທີ່ມີສິດໜ້າທີ່ດ້ານທະນາຄານ ຢູ່ໃນປະເທດດັ່ງກ່າວ.

ສາຂາທະນາຄານທຸລະກິດ ແລະສະຖາບັນຕົວແທນຂອງທະນາຄານທຸລະກິດຕ່າງປະເທດ ໃຫ້ຕັ້ງຢູ່ນະຄອນຫລວງຂອງ ສປປລາວ ແຫ່ງດຽວ.

ທະນາຄານຕ່າງປະເທດ ທີ່ມີຈຸດປະສົງຢາກມາຕັ້ງສາຂາຢູ່ ສປປລາວ ຕ້ອງເລີ່ມຈາກການເປີດສໍານັກງານຕົວແທນຂອງຕົນກ່ອນຢ່າງໜ້ອຍໜຶ່ງປີ ເວັ້ນເສຍແຕ່ກໍລະນີທີ່ທະນາຄານແຫ່ງ ສປປລາວ ຫາກເຫັນວ່າມີຄວາມຈໍາເປັນກໍສາມາດສະເໜີໃຫ້ລັດຖະບານພິຈາລະນາອະນຸມັດໄດ້.

**ມາດຕາ10 ໃໝ່. ສິດ ແລະໜ້າທີ່ຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ມີສິດ ແລະໜ້າທີ່ດັ່ງນີ້:

- ຮັບຝາກເງິນຈາກມວນຊົນທົ່ວໄປ ລວມທັງການຈໍາໜ່າຍຮຸ້ນກູ້ ຫລືພັນທະບັດ;
- ໃຫ້ກູ້ຢືມເງິນ, ອອກການຄໍ້າປະກັນ;
- ບໍລິການຊໍາລະໃຫ້ແກ່ລູກຄ້າ;
- ໃຫ້ການບໍລິການແກ່ລູກຄ້າ: ການແລກປ່ຽນເງິນຕາຕ່າງປະເທດ, ການໝູນເງິນເອົາດອກເບ້ຍ ຫລືຊໍາລະຢູ່ທະນາຄານ ຫລືສະຖາບັນການເງິນອື່ນໆຢູ່ພາຍໃນ ແລະຕ່າງປະເທດ, ຮັບຊື້-ຂາຍ, ຄຸ້ມຄອງປົກປັກຮັກສາ, ຮັບບໍລິຫານ ແລະໃຫ້ຄໍາປຶກສາກ່ຽວກັບການໝູນທຶນ, ກ່ຽວກັບຮຸ້ນ, ພັນທະບັດ, ໃບຢັ້ງຢືນການຄ້າ, ເອກະສານມີຄ່າຄືເງິນ ແລະວັດຖຸມີຄ່າຕ່າງໆ;
- ເປັນຕົວແທນ ຫລືຜູ້ຕາງໜ້າໃຫ້ທະນາຄານທຸລະກິດ ແລະສະຖາບັນການເງິນຕ່າງປະເທດກ່ຽວກັບວຽກງານການເງິນ - ການທະນາຄານ;
- ປະຕິບັດນະໂຍບາຍເງິນຕາ ແລະລະບຽບການຕ່າງໆ ທີ່ທະນາຄານແຫ່ງ ສປປລາວ ວາງອອກ.

## ໝວດທີ II

## ທຶນຂອງທະນາຄານທຸລະກິດ

**ມາດຕາ11 ໃໝ່. ທຶນຂອງທະນາຄານທຸລະກິດ**

ທຶນຈົດທະບຽນຂອງທະນາຄານທຸລະກິດຂອງຄົນລາວ ຢ່າງໜ້ອຍແມ່ນບໍ່ໃຫ້ຫລຸດ ສາມສິບຕື້ກີບ. ທຶນຈົດທະບຽນ ແມ່ນທຶນຂອງຜູ້ຖືຮຸ້ນສ້າງຕັ້ງທະນາຄານທຸລະກິດ ຊຶ່ງປະກອບດ້ວຍເງິນສົດ ແລະວັດຖຸມີຄ່າ ທີ່ປ່ຽນເປັນເງິນໄດ້ທັນທີ ໂດຍມີການແບ່ງທຶນເປັນຮຸ້ນ ແຕ່ລະຮຸ້ນມີຄ່າເທົ່າກັນ; ມູນຄ່າສູງສຸດຂອງແຕ່ລະຮຸ້ນ ແມ່ນບໍ່ໃຫ້ເກີນ ສິບພັນກີບ, ຜູ້ໜຶ່ງມີສິດຖືຮຸ້ນບໍ່ເກີນ ຊາວສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ.

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງທະນາຄານທຸລະກິດນັ້ນ ຕ້ອງນຳທຶນຈົດທະບຽນມາຖອກເຂົ້າບັນຊີເງິນຝາກຂອງຕົນ ທີ່ເປີດໄວ້ນຳທະນາຄານແຫ່ງ ສປປ ລາວ ຈຳນວນ ຊາວຫ້າສ່ວນຮ້ອຍຂອງທຶນຈົດທະບຽນ ພາຍໃນກຳນົດ ເກົ້າສິບວັນນັບແຕ່ມື້ຂຶ້ນທະບຽນເປັນຕົ້ນໄປ. ສ່ວນເຫລືອນັ້ນຕ້ອງຖອກໃຫ້ຄົບຕາມຈຳນວນພາຍໃນກຳນົດ ສາມປີ ຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປລາວ.

ໃນກໍລະນີທີ່ບໍ່ຖອກທຶນຈົດທະບຽນ ເຂົ້າບັນຊີເງິນຝາກຂອງຕົນ ຕາມກຳນົດເວລາທີ່ກ່າວມາຂ້າງເທິງນັ້ນ, ທະນາຄານແຫ່ງ ສປປ ລາວ ມີສິດລົບລ້າງການອະນຸມັດສ້າງຕັ້ງທະນາຄານດັ່ງກ່າວ.

ສຳລັບທຶນຈົດທະບຽນຂອງທະນາຄານທຸລະກິດຕ່າງປະເທດນັ້ນ ຢ່າງໜ້ອຍແມ່ນບໍ່ໃຫ້ຫລຸດສິບລ້ານໂດລາ ສະຫະລັດ. ທຶນດັ່ງກ່າວນີ້ ໃຫ້ນຳມາຈາກຕ່າງປະເທດ ແລະ ນຳໃຊ້ສະເພາະແຕ່ໃນ ສປປລາວ ເທົ່ານັ້ນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ສຳລັບຄົນຕ່າງປະເທດ ທີ່ໄດ້ຮັບອະນຸມັດສ້າງຕັ້ງ ທະນາຄານທຸລະກິດ ຢູ່ ສປປ ລາວ ນັ້ນ ຕ້ອງຖອກທຶນຈົດທະບຽນ ທັງໝົດ ເທື່ອດຽວພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ມື້ໄດ້ຮັບອະນຸມັດຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ.

ຖ້າທະນາຄານທຸລະກິດຂອງຕ່າງປະເທດ ຫາກບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວຂ້າງເທິງ ຫລື ລະບຽບກົດໝາຍຂອງ ສປປລາວ ທະນາຄານແຫ່ງ ສປປລາວ ມີສິດສະເໜີຕໍ່ລັດຖະບານລາວ ເພື່ອພິຈາລະນາລົບລ້າງ ການອະນຸມັດສ້າງຕັ້ງ ທະນາຄານທຸລະກິດດັ່ງກ່າວ.

### ມາດຕາ12 ໃໝ່. ອັດຕາສ່ວນທາງການເງິນ

ທະນາຄານທຸລະກິດ ຕ້ອງຮັກສາອັດຕາສ່ວນທາງການເງິນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ເພື່ອຮັບປະກັນຄວາມໝັ້ນຄົງ ແລະການເຄື່ອນໄຫວຄ່ອງຕົວ ໃນການດຳເນີນທຸລະກິດຂອງທະນາຄານໃຫ້ມີປະສິດທິພາບ.

### ມາດຕາ13 ໃໝ່. ການເພີ່ມ ຫລື ຫລຸດທຶນ

ທະນາຄານທຸລະກິດ ສາມາດເພີ່ມ ຫລື ຫລຸດທຶນຂອງຕົນໄດ້ຕາມການຕົກລົງຂອງສະພາບໍລິຫານ ໂດຍສອດຄ່ອງກັບລະບຽບການທີ່ທະນາຄານແຫ່ງ ສປປລາວ ວາງອອກ .

### ມາດຕາ14 ໃໝ່. ເງິນຄ້ຳປະກັນ

ທຶນຈົດທະບຽນທີ່ນຳມາຖອກເຂົ້າໃນບັນຊີເງິນຝາກ ຕ້ອງຫັກໄວ້ ຊາວຫ້າສ່ວນຮ້ອຍ ເພື່ອເປັນເງິນຄ້ຳປະກັນຊຶ່ງບໍ່ສາມາດຖອນໄດ້ ເມື່ອໃດທະນາຄານນັ້ນຫາກຍັງເຄື່ອນໄຫວທຸລະກິດ ການທະນາຄານຢູ່. ສ່ວນທີ່ເຫລືອນັ້ນແມ່ນອະນຸຍາດໃຫ້ນຳໃຊ້ເພື່ອປ່ອຍເງິນກູ້ຕາມທິດຊີ້ນຳ ຂອງທະນາຄານແຫ່ງ ສປປ ລາວ ເພື່ອກໍ່ສ້າງພື້ນຖານ ແລະ ປະກອບວັດຖຸເຕັກນິກເຂົ້າໃນການເຄື່ອນໄຫວທຸລະກິດຂອງຕົນ.

### ມາດຕາ15 ໃໝ່. ກອງທຶນປົກປ້ອງຜູ້ຝາກເງິນ.

ໃນແຕ່ລະປີທະນາຄານທຸລະກິດ ຕ້ອງມອບເງິນເຂົ້າກອງທຶນປົກປ້ອງຜູ້ຝາກເງິນ ໃນອັດຕາສ່ວນໃດໜຶ່ງຂອງຍອດເງິນຝາກປີຜ່ານມາ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ເພື່ອສ້າງເປັນກອງທຶນປົກປ້ອງຜູ້ຝາກເງິນນຳທະນາຄານທຸລະກິດ.

**ມາດຕາ 16. ການໂອນຮຸ້ນ**

ຮຸ້ນຂອງທະນາຄານທຸລະກິດ ບໍ່ສາມາດຖອນໄດ້ ແຕ່ສາມາດໂອນ, ຂາຍ ແລະ ສາມາດປ່ຽນມືໄດ້ໂດຍປະຕິບັດຕາມລະບຽບທີ່ສະພາບໍລິຫານທະນາຄານທຸລະກິດນັ້ນກຳນົດອອກ. ການໂອນ, ຂາຍ ຫລື ປ່ຽນມື ຕ້ອງແຈ້ງໃຫ້ສະພາບໍລິຫານຊາບເຈັດວັນກ່ອນມື້ໂອນ, ຂາຍ ຫລື ປ່ຽນມື ແລະ ຕ້ອງລາຍງານໃຫ້ທະນາຄານ ແຫ່ງ ສປປ ລາວ ຊາບ.

## ໝວດທີ III
## ການຈັດຕັ້ງທະນາຄານທຸລະກິດ

**ມາດຕາ 17. ການຈັດຕັ້ງທະນາຄານທຸລະກິດ**

ການຈັດຕັ້ງທະນາຄານທຸລະກິດປະກອບດ້ວຍສະພາບໍລິຫານ, ຜູ້ອຳນວຍການ, ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ແລະ ຜູ້ກວດກາ.

**ມາດຕາ 18. ສະພາບໍລິຫານ**

ສະພາບໍລິຫານແມ່ນອົງການບໍລິຫານສູງສຸດຂອງທະນາຄານທຸລະກິດມີພາລະບົດບາດຕັດສິນບັນຫາທັງໝົດຂອງທະນາຄານທຸລະກິດເວັ້ນເສັຍແຕ່ບາງບັນຫາທີ່ຂຶ້ນກັບສິດຕົກລົງຂອງກອງປະຊຸມໃຫຍ່ຜູ້ຖືຮຸ້ນ.

ສຳລັບສາຂາ ແລະ ສຳນັກງານຕົວແທນຂອງທະນາຄານທຸລະກິດຕ່າງປະເທດແມ່ນບໍ່ໃຫ້ມີສະພາບໍລິຫານ.

**ມາດຕາ19 ໃໝ່. ໂຄງປະກອບສະພາບໍລິຫານ**

ສະພາບໍລິຫານປະກອບດ້ວຍສະມາຊິກ ແຕ່ຫ້າຫາສິບເອັດຄົນ ໃນນັ້ນມີຜູ້ຕາງໜ້າຄົນງານໜຶ່ງຫາສອງຄົນ. ສະມາຊິກສະພາບໍລິຫານຖືກເລືອກຕັ້ງ ຫລື ປົດຕຳແໜ່ງ ໂດຍກອງປະຊຸມໃຫຍ່ຜູ້ຖືຮຸ້ນ ເວັ້ນເສຍແຕ່ຜູ້ຕາງໜ້າພະນັກງານ, ຄົນງານ ຊຶ່ງຖືກເລືອກຕັ້ງຫລືປົດຕຳແໜ່ງ ໂດຍກອງປະຊຸມພະນັກງານ, ຄົນງານ. ສະມາຊິກສະພາບໍລິຫານມີອາຍຸການສາມປີ ແລະສາມາດຖືກເລືອກຕັ້ງຄືນໃໝ່ໄດ້.

ໃນກໍລະນີທີ່ສະມາຊິກສະພາບໍລິຫານ ຜູ້ໃດຜູ້ໜຶ່ງຫາກເສຍຊີວິດ ຫລື ບໍ່ສາມາດປະຕິບັດໜ້າທີ່ໄດ້ ຫລື ລາອອກຈາກໜ້າທີ່ໃນລະຫວ່າງສອງສະໄໝກອງປະຊຸມໃຫຍ່ຜູ້ຖືຮຸ້ນ ສະພາບໍລິຫານມີສິດ

ແຕ່ງຕັ້ງສະມາຊິກຄົນອື່ນຂຶ້ນແທນເປັນການຊົ່ວຄາວ ແລ້ວນຳສະເໜີຕໍ່ກອງປະຊຸມໃຫຍ່ຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

**ມາດຕາ 20. ສິດ ແລະ ໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານທະນາຄານທຸລະກິດມີສິດ ແລະ ໜ້າທີ່ດັ່ງນີ້:

- ກຳນົດລະບຽບການກ່ຽວກັບການຄຸ້ມຄອງ, ການບໍລິຫານທຸລະກິດຂອງທະນາຄານ, ການຄຸ້ມຄອງການເງິນ, ແຮງງານ, ເງິນເດືອນ, ເບ້ຍປະຊຸມ ແລະ ກົດລະບຽບບັນຫາສຳຄັນອື່ນໆ;
- ຕິດຕາມກວດກາການເຄື່ອນໄຫວຂອງຄະນະອຳນວຍການທະນາຄານທຸລະກິດ;
- ຮັບຮອງເອົາການລາຍງານການເຄື່ອນໄຫວ ແລະ ການສະຫລຸບບັນຊີປະຈຳປີຂອງທະນາຄານທຸລະກິດເພື່ອນຳສະເໜີຕໍ່ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ແລະ ລາຍງານຕໍ່ທະນາຄານ ແຫ່ງ ສປປ ລາວ;
- ກຳນົດສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ, ການປ່ອຍສິນເຊື່ອ, ການຄ້ຳປະກັນ, ການສັ່ງຈ່າຍເພື່ອສະເໜີຕໍ່ກອງປະຊຸມໃຫຍ່ຜູ້ຖືຮຸ້ນພິຈາລະນາ;
- ເລືອກຕັ້ງ ຫລື ປົດຕຳແໜ່ງປະທານສະພາບໍລິຫານ;
- ແຕ່ງຕັ້ງ ຫລື ປົດຕຳແໜ່ງຜູ້ອຳນວຍການ;
- ສະເໜີເອົາເຈົ້າໜ້າທີ່ກວດສອບບັນຊີ.

**ມາດຕາ 21 ໃໝ່. ກອງປະຊຸມສະພາບໍລິຫານ**

ສະພາບໍລິຫານທະນາຄານທຸລະກິດເຄື່ອນໄຫວວຽກງານຂອງຕົນຕາມລະບອບ ກອງປະຊຸມ. ກອງປະຊຸມສະພາບໍລິຫານໄຂຂຶ້ນເດືອນລະຄັ້ງ ຕາມການຮຽກໂຮມຂອງປະທານສະພາບໍລິຫານ ຫລື ຕາມຄຳສະເໜີຂອງສະມາຊິກສະພາບໍລິຫານຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງສະມາຊິກສະພາບໍລິຫານທັງໝົດ.

ກອງປະຊຸມສະພາບໍລິຫານສະໄໝສາມັນຕ້ອງແຈ້ງລ່ວງໜ້າເປັນລາຍລັກອັກສອນ ພ້ອມດ້ວຍລະບຽບວາລະກອງປະຊຸມ ໃຫ້ສະມາຊິກສະພາບໍລິຫານຊາບຢ່າງໜ້ອຍເຈັດວັນ ກ່ອນວັນໄຂກອງປະຊຸມ. ໃນກໍລະນີທີ່ຈຳເປັນກໍອາດຈະໄຂກອງປະຊຸມສະໄໝວິສາມັນຂຶ້ນໄດ້ທຸກເວລາ.

ກອງປະຊຸມສະພາບໍລິຫານຈະໄຂຂຶ້ນໄດ້ກໍ່ຕໍ່ເມື່ອ ຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍເຄິ່ງໜຶ່ງຂອງສະມາຊິກສະພາບໍລິຫານທັງໝົດ. ມະຕິຂອງກອງປະຊຸມສະພາບໍລິຫານຈະມີຜົນສັກສິດໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫລາຍຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີທີ່ມີຄະແນນສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນຊີ້ຂາດ. ກອງປະຊຸມສະພາບໍລິຫານແຕ່ລະຄັ້ງຕ້ອງມີບົດບັນທຶກເຊັນໂດຍຜູ້ເຂົ້າຮ່ວມກອງປະຊຸມທັງໝົດ.

**ມາດຕາ 22. ສິດ ແລະ ໜ້າທີ່ຂອງປະທານ ແລະ ຮອງປະທານສະພາບໍລິຫານ**

ປະທານສະພາບໍລິຫານມີສິດ ແລະ ໜ້າທີ່ດັ່ງນີ້:

- ຮຽກໂຮມ ແລະ ນຳພາກອງປະຊຸມສະພາບໍລິຫານ;
- ຮັບຜິດຊອບທຸກການເຄື່ອນໄຫວຂອງທະນາຄານທຸລະກິດ;
- ລາຍງານຕໍ່ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດ;
- ສະເໜີນະໂຍບາຍດ້ານທຸລະກິດເງິນຕາ, ສິນເຊື່ອ ຂອງທະນາຄານທຸລະກິດຕໍ່ກອງປະຊຸມສະພາບໍລິຫານ.

ຮອງປະທານສະພາບໍລິຫານເປັນຜູ້ຊ່ວຍວຽກປະທານ. ຮອງປະທານອາດໄດ້ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງປະທານ ແລະ ປະຕິບັດໜ້າທີ່ແທນປະທານໃນເວລາປະທານບໍ່ຢູ່ ຫລື ຕິດຂັດ.

**ມາດຕາ23 ໃໝ່. ຄວາມຮັບຜິດຊອບຂອງສະມາຊິກສະພາບໍລິຫານ**

ປະທານ, ຮອງປະທານ ແລະສະມາຊິກສະພາບໍລິຫານ ຕ້ອງຮັບຜິດຊອບທາງແພ່ງຮ່ວມກັນຕໍ່ທະນາຄານທຸລະກິດ ແລະ ຕໍ່ບຸກຄົນພາຍນອກ ໃນກໍລະນີທີ່ໄດ້ລະເມີດກົດໝາຍ, ລະບຽບການ ຂອງ ສປປ ລາວ ຫລື ກົດລະບຽບພາຍໃນຂອງທະນາຄານທຸລະກິດ ຫລື ມີຄວາມຜິດພາດໃນການຄຸ້ມຄອງທະນາຄານທຸລະກິດ ຊຶ່ງພາໃຫ້ເກີດຄວາມເສຍຫາຍ. ຖ້າຄວາມເສຍຫາຍນັ້ນຫາກເກີດຈາກສະມາຊິກຜູ້ໃດຜູ້ໜຶ່ງ ສະມາຊິກຜູ້ນັ້ນຈະຕ້ອງຮັບຜິດຊອບແຕ່ພຽງຜູ້ດຽວ. ນອກຈາກນັ້ນ ສະມາຊິກສະພາບໍລິຫານ ຍັງຈະໄດ້ຮັບຜິດຊອບທາງອາຍາອີກ ໃນກໍລະນີທີ່ໄດ້ກະທຳຜິດທາງອາຍາ.

**ມາດຕາ 24. ຜູ້ອຳນວຍການ**

ຜູ້ອຳນວຍການທະນາຄານທຸລະກິດເປັນຜູ້ບໍລິຫານ ແລະ ດຳເນີນທຸກກິດຈະການໃນນາມທະນາຄານ ໃນຂອບເຂດວັດຖຸປະສົງຂອງທະນາຄານທຸລະກິດ. ຜູ້ອຳນວຍການຖືກແຕ່ງຕັ້ງ ຫລືປົດຕຳແໜ່ງໂດຍສະພາບໍລິຫານຕາມການສະເໜີຂອງກອງປະຊຸມໃຫຍ່ຜູ້ຖືຮຸ້ນ.

**ມາດຕາ 25. ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ**

ຜູ້ອຳນວຍການມີສິດ ແລະ ໜ້າທີ່ດັ່ງນີ້:

- ຄຸ້ມຄອງ ແລະ ຕັດສິນທຸກບັນຫາຂອງທະນາຄານທຸລະກິດໃນຂອບເຂດທີ່ສະພາບໍລິຫານມອບໝາຍໃຫ້, ພ້ອມກັນນັ້ນກໍມີໜ້າທີ່ຮັບຜິດຊອບທຸກການເຄື່ອນໄຫວວຽກງານທະນາຄານທຸລະກິດຕໍ່ສະພາບໍລິຫານ ແລະ ຕໍ່ກອງປະຊຸມໃຫຍ່ຜູ້ຖືຮຸ້ນ;
- ເປັນຜູ້ຕາງໜ້າໃຫ້ທະນາຄານທຸລະກິດໃນການພົວພັນ ແລະ ຜູກພັນສັນຍາກັບພາກສ່ວນອື່ນໆ;

- ຕົກລົງຮັບເອົາ ຫລື ປົດພະນັກງານອອກຈາກວຽກ, ປະຕິບັດນະໂຍບາຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍອື່ນໆ ຕາມການຕົກລົງຂອງສະພາບໍລິຫານ, ຍ້ອງຍໍ, ເລື່ອນຊັ້ນ ໃຫ້ພະນັກງານຂອງຕົນ ຫລື ປະຕິບັດມາດຕະການທາງດ້ານວິໄນຕໍ່ຜູ້ກະທຳຜິດ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ.

ຜູ້ອຳນວຍການມີຮອງຜູ້ອຳນວຍການໜຶ່ງ ຫລື ຫລາຍຄົນ ເປັນຜູ້ຊ່ວຍວຽກຕາມການຕົກລົງຂອງສະພາບໍລິຫານ.

**ມາດຕາ26 ໃໝ່. ການເກືອດຫ້າມ**

ປະທານສະພາບໍລິຫານ ບໍ່ໃຫ້ຄວບຕຳແໜ່ງເປັນຜູ້ອຳນວຍການທະນາຄານທຸລະກິດ.

ປະທານ, ຮອງປະທານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການ ແລະຮອງຜູ້ອຳນວຍການຂອງທະນາຄານທຸລະກິດ ພ້ອມດ້ວຍຜົວ ຫລືເມັຍ, ລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລືເຖິງກະສຽນອາຍຸແລ້ວກໍຕາມຫາກຍັງຢູ່ໃນການຄຸ້ມຄອງຂອງພໍ່ແມ່, ບໍລິສັດຮຸ້ນສ່ວນຂອງຜົວຫລືເມັຍຂອງຜູ້ກ່ຽວນັ້ນ ບໍ່ມີສິດກູ້ຢືມເງິນນຳທະນາຄານບ່ອນຕົນສັງກັດໄປເຮັດທຸລະກິດ ຫລືໃຫ້ທະນາຄານທຸລະກິດຂອງຕົນໃຫ້ການຄ້ຳປະກັນແກ່ຕົນເອງ ເພື່ອກູ້ຢືມເງິນນຳຜູ້ອື່ນ ຫລືນຳໃຊ້ສິດໃນໜ້າທີ່ເພື່ອຄ້ຳປະກັນໃນນາມສ່ວນຕົວໃຫ້ຜູ້ອື່ນກູ້ຢືມເງິນນຳທະນາຄານຂອງຕົນ.

ໃນກໍລະນີທີ່ປະທານ, ຮອງປະທານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການ ຫລືຮອງຜູ້ອຳນວຍການຫາກມີຈຸດປະສົງ ຢາກເຮັດວຽກຢູ່ວິສາຫະກິດອື່ນຄຽງຄູ່ກັນໄປ ຈະຕ້ອງໄດ້ຮັບຄວາມເຫັນດີຈາກສະພາບໍລິຫານເສຍກ່ອນ.

ສ່ວນສະມາຊິກສະພາບໍລິຫານ, ຜູ້ອຳນວຍການ, ຮອງຜູ້ອຳນວຍການ ຫລືພະນັກງານຜູ້ໃດຜູ້ໜຶ່ງຂອງທະນາຄານທຸລະກິດ ທີ່ຖືກລົງໂທດໄລ່ອອກຈາກລັດຖະການ ຫລືຜູ້ເຄີຍເປັນກຳມະການ, ຜູ້ຈັດການ, ຜູ້ຊ່ວຍທີ່ຖືກຖອນໃບອະນຸຍາດນັ້ນ ແມ່ນຫ້າມດຳເນີນທຸລະກິດການທະນາຄານ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວເທົ່ານັ້ນ.

**ມາດຕາ 27. ກອງປະຊຸມໃຫຍ່ຜູ້ຖືຮຸ້ນ**

ກອງປະຊຸມໃຫຍ່ຜູ້ຖືຮຸ້ນແມ່ນການຈັດຕັ້ງສູງສຸດຂອງທະນາຄານທຸລະກິດ ມີສິດຕົກລົງບັນຫາສຳຄັນຂອງທະນາຄານທຸລະກິດ.

ກອງປະຊຸມໃຫຍ່ຜູ້ຖືຮຸ້ນໄຂຂຶ້ນຢ່າງໜ້ອຍປີລະເທື່ອ, ຜູ້ມີສິດຮຽກໂຮມກອງປະຊຸມໃຫຍ່ຜູ້ຖືຮຸ້ນມີດັ່ງນີ້:

- ສະພາບໍລິຫານ;
- ຜູ້ອຳນວຍການ;
- ເຈົ້າໜ້າທີ່ກວດສອບບັນຊີ;
- ຜູ້ຖືຮຸ້ນທີ່ຕາງໜ້າໃຫ້ຢ່າງໜ້ອຍໜຶ່ງສ່ວນສາມຂອງຈຳນວນຮຸ້ນທັງໝົດ;
- ຜູ້ຖືກແຕ່ງຕັ້ງຈາກສານຕາມຄຳຮ້ອງຂໍຂອງຜູ້ຖືຮຸ້ນ;

- ຄະນະຊຳລະສະສາງ.

ໝາຍຮຽກໂຮມພ້ອມດ້ວຍວາລະກອງປະຊຸມໃຫຍ່ຜູ້ຖືຮຸ້ນຕ້ອງສົ່ງໃຫ້ຜູ້ຖືຮຸ້ນຢ່າງຊ້າສິບວັນກ່ອນວັນໄຂກອງປະຊຸມ.

ກອງປະຊຸມໃຫຍ່ຜູ້ຖືຮຸ້ນສະໄໝສາມັນຈະໄຂຂຶ້ນໄດ້ກໍຕໍ່ເມື່ອຫາກມີຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນເຂົ້າຮ່ວມຢ່າງໜ້ອຍເຄິ່ງໜຶ່ງຂອງຜູ້ຖືຮຸ້ນ ແລະ ຕາງໜ້າໃຫ້ຢ່າງໜ້ອຍເຄິ່ງໜຶ່ງຂອງຮຸ້ນທັງໝົດ. ຖ້າຫາກວ່າບໍ່ສາມາດຮຽກໂຮມກອງປະຊຸມໃນຄັ້ງທີໜຶ່ງໄດ້ນັ້ນ ກອງປະຊຸມຄັ້ງທີສອງສາມາດໄຂຂຶ້ນໄດ້ໂດຍບໍ່ອີງໃສ່ຈຳນວນຜູ້ເຂົ້າຮ່ວມກອງປະຊຸມ.

**ມາດຕາ 28. ມະຕິກອງປະຊຸມໃຫຍ່ຜູ້ຖືຮຸ້ນ**

ມະຕິຂອງກອງປະຊຸມໃຫຍ່ຜູ້ຖືຮຸ້ນສະໄໝສາມັນຈະມີຜົນສັກສິດໄດ້ກໍຕໍ່ເມື່ອຫາກໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມກອງປະຊຸມ.

ການລົງຄະແນນສຽງໃຫ້ຖືເອົາໜຶ່ງຮຸ້ນຕໍ່ໜຶ່ງຄະແນນ.

**ມາດຕາ 29. ສິດ ແລະ ໜ້າທີ່ຂອງກອງປະຊຸມໃຫຍ່ສະໄໝສາມັນ**

ກອງປະຊຸມໃຫຍ່ສະໄໝສາມັນມີສິດ ແລະ ໜ້າທີ່ດັ່ງນີ້:

- ຮັບຟັງການລາຍງານຂອງສະພາບໍລິຫານ ກ່ຽວກັບການດຳເນີນງານຂອງທະນາຄານ, ການແຈ້ງຜົນກຳໄລ-ຂາດທຶນ ແລະ ຂໍ້ສະເໜີກ່ຽວກັບການແບ່ງປັນຜົນກຳໄລ;
- ຮັບຟັງການລາຍງານຂອງເຈົ້າໜ້າທີ່ກວດສອບບັນຊີ;
- ລົງມະຕິຮັບຮອງເອົາບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ແຜນການດຳເນີນງານຂອງປີຕໍ່ໄປຂອງທະນາຄານ;
- ຮັບຮອງເອົາບົດສະຫລຸບບັນຊີປະຈຳປີ;
- ຮັບຮອງເອົາການແບ່ງປັນຜົນກຳໄລ;
- ເລືອກຕັ້ງ ຫລື ປົດຕຳແໜ່ງສະມາຊິກສະພາບໍລິຫານ;
- ແຕ່ງຕັ້ງເຈົ້າໜ້າທີ່ກວດສອບບັນຊີ ແລະ ກຳນົດຄ່າກວດສອບຂອງເຈົ້າໜ້າທີ່ກວດສອບບັນຊີ;
- ອະນຸຍາດໃຫ້ສະພາບໍລິຫານດຳເນີນວຽກງານສະເພາະໃດໜຶ່ງຕາງກອງປະຊຸມໃຫຍ່ສະໄໝສາມັນ.

**ມາດຕາ 30. ກອງປະຊຸມໃຫຍ່ສະໄໝວິສາມັນ**

ກອງປະຊຸມໃຫຍ່ສະໄໝວິສາມັນໄຂຂຶ້ນເວລາໃດກໍໄດ້ເພື່ອພິຈາລະນາການປ່ຽນແປງກົດລະບຽບຂອງທະນາຄານທຸລະກິດເຊັ່ນ: ການຕໍ່ອາຍຸການ, ການເພີ່ມທຶນ, ການຫລຸດທຶນລົງຂອງທະນາຄານທຸລະກິດ.

ລະບຽບການຮຽກໂຮມກອງປະຊຸມໃຫຍ່ສະໄໝວິສາມັນຂອງທະນາຄານທຸລະກິດແມ່ນໃຫ້ປະຕິບັດຄືກັນກັບລະບຽບການຮຽກໂຮມກອງປະຊຸມໃຫຍ່ສະໄໝສາມັນ.

ກອງປະຊຸມໃຫຍ່ສະໄໝວິສາມັນຈະໄຂຂຶ້ນໄດ້ກໍຕໍ່ເມື່ອຫາກມີຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນທັງໝົດ ຊຶ່ງຕາງໜ້າໃຫ້ຢ່າງໜ້ອຍສອງສ່ວນສາມຂອງຮຸ້ນທັງໝົດສຳລັບການຮຽກໂຮມຄັ້ງທີໜຶ່ງ ແລະ ຢ່າງໜ້ອຍເຄິ່ງໜຶ່ງຂອງຜູ້ຖືຮຸ້ນທັງໝົດສຳລັບການຮຽກໂຮມຄັ້ງທີສອງ. ໃນກໍລະນີທີ່ຜູ້ຖືຮຸ້ນຫາກບໍ່ມາຄົບຕາມຈຳນວນດັ່ງກ່າວນີ້ ກໍໃຫ້ເລື່ອນການປະຊຸມໄປແຕ່ໃຫ້ໄຂຂຶ້ນພາຍໃນກຳນົດສອງເດືອນຢ່າງຊ້າ, ກອງປະຊຸມຄັ້ງນີ້ສາມາດໄຂຂຶ້ນໄດ້ໂດຍບໍ່ອີງໃສ່ຈຳນວນຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມໃຫຍ່ສະໄໝວິສາມັນຈະມີຜົນສັກສິດໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຢ່າງໜ້ອຍສອງສ່ວນສາມຂອງຈຳນວນຮຸ້ນທັງໝົດຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 31. ສິດ ແລະ ໜ້າທີ່ຂອງຜູ້ຖືຮຸ້ນ**

ຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ດັ່ງນີ້:

- ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ຖືຮຸ້ນ ແລະ ລົງຄະແນນສຽງ;
- ໄດ້ຮັບເອກະສານຢ່າງຊ້າສິບວັນກ່ອນວັນໄຂກອງປະຊຸມປະຈຳປີ;
- ໄດ້ຮັບຊາບບັນຫາຕ່າງໆ ກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດຂອງຕົນ;
- ຕັ້ງຄຳຖາມ, ສະເໜີຄຳຄິດຄຳເຫັນເປັນລາຍລັກອັກສອນກ່ຽວກັບການຄຸ້ມຄອງທະນາຄານທຸລະກິດ;
- ໄດ້ຮັບການແບ່ງປັນຜົນກຳໄລຕາມອັດຕາສ່ວນຂອງຮຸ້ນທີ່ຕົນປະກອບ;
- ຜູ້ຖືຮຸ້ນຕ້ອງຖອກຮຸ້ນຂອງຕົນໃຫ້ຄົບຖ້ວນຕາມກຳນົດເວລາ;
- ຜູ້ຖືຮຸ້ນບໍ່ມີສິດຖອນຮຸ້ນຂອງຕົນ ແຕ່ມີສິດໂອນ, ຂາຍ ແລະ ປ່ຽນມືໃຫ້ຜູ້ອື່ນເທົ່ານັ້ນ;
- ຜູ້ຖືຮຸ້ນຕ້ອງຮັບຜິດຊອບຕໍ່ໜີ້ສິນຂອງທະນາຄານບໍ່ເກີນມູນຄ່າຮຸ້ນທີ່ຕົນຍັງບໍ່ທັນໄດ້ຖອກເຕັມເທົ່ານັ້ນ;

**ມາດຕາ32 ໃໝ່. ການກວດກາພາຍໃນທະນາຄານທຸລະກິດ**

ຜູ້ກວດກາພາຍໃນທະນາຄານທຸລະກິດ ແມ່ນບຸກຄະລາກອນທີ່ປະຕິບັດພາລະບົດບາດກວດກາການໃຊ້ຈ່າຍ ແລະ ການດຳເນີນວຽກງານປະຈຳວັນຂອງທະນາຄານທຸລະກິດ.

ຜູ້ກວດກາພາຍໃນຖືກແຕ່ງຕັ້ງ ຫລືປົດຕຳແໜ່ງໂດຍ ສະພາບໍລິຫານຂອງທະນາຄານທຸລະກິດ ຕາມການສະເໜີຂອງປະທານສະພາບໍລິຫານ, ມີອາຍຸການສາມປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຜູ້ກວດກາພາຍໃນມີສິດ ແລະ ໜ້າທີ່ດັ່ງນີ້:

- ກວດກາການໃຊ້ຈ່າຍ ແລະ ການເຄື່ອນໄຫວຂອງທະນາຄານທຸລະກິດ;

- ສອບຖາມ ແລະ ກວດກາທຸກເອກະສານທີ່ຕ້ອງການ ແລະ ຈຳເປັນໃນການປະຕິບັດໜ້າທີ່ຂອງຕົນ;

- ສະເໜີຄວາມຄິດຄວາມເຫັນຕໍ່ຜູ້ອຳນວຍການ;

- ຄົ້ນຄ້ວາພິຈາລະນາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງການເຄື່ອນໄຫວບັນຊີປະຈຳວັນ, ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ;

- ເຮັດບົດລາຍງານກ່ຽວກັບການກວດກາບັນຊີ ແລະ ການເຄື່ອນໄຫວອື່ນໆປະຈຳປີສົ່ງໃຫ້ກອງປະຊຸມໃຫຍ່ຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ;

- ເຮັດບົດລາຍງານຕໍ່ສະພາບໍລິຫານ ແລະທະນາຄານແຫ່ງ ສປປລາວ ໃນທັນທີ ຖ້າຫາກກວດກາເຫັນວ່າມີການລະເມີດກົດໝາຍ ຫລືລະບຽບການ.

## ໝວດທີ IV
## ການດຳເນີນທຸລະກິດຂອງທະນາຄານທຸລະກິດ

### ມາດຕາ 33. ສິດໃນການດຳເນີນງານຂອງທະນາຄານທຸລະກິດ

ທະນາຄານທຸລະກິດມີສິດຈັດຕັ້ງລະດົມເງິນຝາກດ້ວຍຮູບການຕ່າງໆເຊັ່ນ:

ເງິນຝາກກະແສລາຍວັນ, ເງິນຝາກປະຢັດ, ເງິນຝາກມີກຳນົດ ແລະ ເງິນຝາກອື່ນໆ ລວມທັງການຈຳໜ່າຍຮຸ້ນກູ້ ຫລື ພັນທະບັດອອກສູ່ມວນຊົນ.

ທະນາຄານທຸລະກິດຕ້ອງຮັບປະກັນການຖອນເງິນຝາກຄືນຂອງລູກຄ້າຕາມການສັນຍາຂອງການຝາກເງິນ ແລະ ຕ້ອງຮັກສາຄວາມລັບກ່ຽວກັບຖານະບັນຊີເງິນຝາກຂອງລູກຄ້າ.

ທະນາຄານທຸລະກິດ ມີສິດກຳນົດອັດຕາດອກເບ້ຍເງິນຝາກເອົາເອງໄດ້ ບົນພື້ນຖານນະໂຍບາຍທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ. ທະນາຄານທຸລະກິດຕ້ອງຈ່າຍດອກເບ້ຍເງິນຝາກໃຫ້ແກ່ລູກຄ້າຕາມສັນຍາທີ່ໄດ້ຕົກລົງກັນ.

### ມາດຕາ 34. ການບໍລິການຮັບຝາກເງິນ

ບຸກຄົນ ຫລື ນິຕິບຸກຄົນ ສາມາດເປີດບັນຊີເງິນຝາກໄດ້ຢູ່ທະນາຄານທຸລະກິດໃດໜຶ່ງທີ່ຕັ້ງຢູ່ ສປປ ລາວ. ຜູ້ຈະເປີດບັນຊີເງິນຝາກຕ້ອງປະກອບເອກະສານຢ່າງຄົບຖ້ວນຕາມທີ່ທະນາຄານທຸລະກິດໄດ້ກຳນົດອອກ.

ເຈົ້າຂອງບັນຊີເງິນຝາກທຸກຄົນສາມາດມອບສິດໃຫ້ຜູ້ອື່ນເປັນຕົວແທນໃຫ້ແກ່ຕົນໃນການຝາກເງິນ ແລະ ຖອນເງິນໄດ້. ແຕ່ການມອບສິດດັ່ງກ່າວຕ້ອງຂຽນເປັນລາຍລັກອັກສອນໂດຍມີລາຍເຊັນຂອງຜູ້ມອບສິດ ແລະ ຜູ້ຮັບສັນທະ.

ພະນັກງານທະນາຄານທຸລະກິດບໍ່ມີສິດເປີດເຜີຍຖານະບັນຊີເງິນຝາກຂອງລູກຄ້າເວັ້ນເສຍແຕ່ມີຄຳສັ່ງຂອງສານ, ອົງການກວດກາ ຫລື ໄດ້ຮັບອະນຸຍາດຈາກຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 35. ການໃຫ້ສິນເຊື່ອ**

ທະນາຄານທຸລະກິດເອົາເງິນໃຫ້ກູ້ແກ່ລູກຄ້າ, ຮັບຊື້ຫລຸດພັນທະບັດ ຫລື ໃບຢັ້ງຢືນການຄ້າປະເພດຕ່າງໆ ດ້ວຍທຶນຂອງຕົນເອງ, ທຶນເງິນຝາກ, ທຶນເງິນກູ້ນຳທະນາຄານທຸລະກິດດ້ວຍກັນ ຫລື ກູ້ຢືມນຳສະຖາບັນການເງິນອື່ນໆ. ໃນກໍລະນີທີ່ທຶນຫາກບໍ່ພຽງພໍ ທະນາຄານທຸລະກິດສາມາດຂໍກູ້ຢືມເພີ່ມເຕີມນຳທະນາຄານ ແຫ່ງ ສປປ ລາວ ດ້ວຍຮູບການຂໍຢືມລ່ວງໜ້າ ຫລື ຂາຍຫລຸດພັນທະບັດຕາມເງື່ອນໄຂ ແລະ ລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກ. ການໃຫ້ກູ້ຢືມຕໍ່ລູກຄ້າຕ້ອງສອດຄ່ອງກັບນະໂຍບາຍເງິນຕາທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.

**ມາດຕາ 36. ປະເພດເງິນກູ້**

ເງິນທີ່ທະນາຄານທຸລະກິດໃຫ້ລູກຄ້າກູ້ຢືມປະກອບດ້ວຍ:

- ເງິນໃຫ້ກູ້ຢືມເປັນວົງເງິນລ່ວງໜ້າ;
- ເງິນເບີກເກີນບັນຊີ;
- ເງິນກູ້ແບບກະແສລາຍວັນ;
- ເງິນກູ້ໄລຍະສັ້ນແຕ່ໜຶ່ງປີລົງມາ, ເງິນກູ້ໄລຍະກາງເກີນກວ່າໜຶ່ງປີຫາສາມປີ ແລະ ເງິນກູ້ໄລຍະຍາວເກີນກວ່າສາມປີຂຶ້ນໄປ;
- ເງິນກູ້ເພື່ອເປີດໜັງສືສິນເຊື່ອ (L/C) ເພື່ອການຂາອອກ-ຂາເຂົ້າ ກັບຕ່າງປະເທດ ແລະ ອື່ນໆ.

**ມາດຕາ37 ໃໝ່. ສັນຍາກູ້ຢືມ**

ການໃຫ້ກູ້ຢືມຕ້ອງມີສັນຍາລະຫວ່າງທະນາຄານທຸລະກິດກັບລູກຄ້າ. ຄູ່ສັນຍາມີພັນທະໃນການປະຕິບັດສັນຍາໃຫ້ຄົບຖ້ວນ.

ເນື້ອໃນສັນຍາຕ້ອງໄດ້ກຳນົດແຈ້ງບາງບັນຫາພື້ນຖານເຊັ່ນ:

- ຈຳນວນເງິນໃຫ້ກູ້ຢືມ;
- ເປົ້າໝາຍ ແລະ ກຳນົດເວລາໃນການນຳໃຊ້ເງິນ;
- ກຳນົດເວລາໃຊ້ໜີ້;
- ລະບຽບການໃຊ້ແທນຄືນ;
- ອັດຕາດອກເບ້ຍເງິນກູ້;
- ການປັບໃໝ;

- ການຄ້ຳປະກັນ;
- ວິທີແກ້ໄຂຂໍ້ຂັດແຍ່ງ.

**ມາດຕາ 38. ການຄ້ຳປະກັນ**

ທະນາຄານທຸລະກິດມີສິດໃຫ້ການຄ້ຳປະກັນໜີ້ສິນແກ່ລູກຄ້າ ໂດຍມີສິດເກັບຄ່າທຳນຽມ ແລະ ດອກເບັ້ຍຕາມອັດຕາທີ່ຕົນກຳນົດອອກໂດຍສອດຄ່ອງກັບລະບຽບການຂອງທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 39. ການບໍລິການລູກຄ້າ**

ນອກຈາກການຮັບຝາກເງິນ, ການຖອນເງິນ ແລະ ການໃຫ້ສິນເຊື່ອແລ້ວ ທະນາຄານທຸລະກິດບໍລິການລູກຄ້າດ້ວຍການໂອນເງິນ, ການຊຳລະ, ການແລກປ່ຽນເງິນຕາຕ່າງປະເທດ ແລະ ການອອກໜັງສືຄ້ຳປະກັນປະເພດຕ່າງໆ.

ການເກັບຄ່າທຳນຽມບໍລິການຂອງທະນາຄານທຸລະກິດຕ້ອງໃຫ້ສອດຄ່ອງກັບລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກ.

ທະນາຄານທຸລະກິດປະຕິບັດການຊື້-ຂາຍ ເງິນຕາຕ່າງປະເທດ ຫລື ຕັ້ງຮ້ານແລກປ່ຽນເງິນຕາຕ່າງປະເທດຕາມເງື່ອນໄຂທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ ແລະ ຢູ່ພາຍໃຕ້ການກວດກາຂອງທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 40. ການປະຕິບັດພັນທະໃນການເສຍອາກອນ**

ທະນາຄານທຸລະກິດຕ້ອງເສຍອາກອນໃຫ້ລັດຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສ່ວຍສາອາກອນ.

**ມາດຕາ 41 ໃໝ່. ພັນທະຂອງທະນາຄານຕໍ່ຜູ້ຝາກເງິນ**

ທະນາຄານທຸລະກິດຕ້ອງຮັບຜິດຊອບຕໍ່ການເຄື່ອນໄຫວທຸລະກິດຂອງຕົນ ແລະ ຕ້ອງຮັບຜິດຊອບສົ່ງຄືນເງິນຝາກ, ໜີ້ສິນຕ່າງໆທີ່ທະນາຄານມີຕໍ່ລູກຄ້າ.

ລູກຄ້າທຸກຄົນ ທີ່ມີເງິນຝາກຄົບກຳນົດຢູ່ທະນາຄານ ຊຶ່ງທະນາຄານບໍ່ສາມາດໃຊ້ແທນໜີ້ສິນຂອງຕົນໄດ້ ມີສິດໄດ້ຮັບການທົດແທນເງິນຝາກຄືນ ຈາກກອງທຶນປົກປ້ອງຜູ້ຝາກເງິນ ຕາມລະບຽບການຂອງກອງທຶນດັ່ງກ່າວ ແລະ ຍັງໄດ້ຮັບການຢັ້ງຢືນວ່າເປັນເຈົ້າໜີ້ຕໍ່ຍອດເງິນຝາກທີ່ຍັງຄ້າງຮັບຈາກທະນາຄານດັ່ງກ່າວ.

ລູກຄ້າຊຶ່ງມີຂໍ້ຂັດແຍ່ງ ກ່ຽວກັບການຮຽກຮ້ອງການທົດແທນຄ່າເສຍຫາຍໃຫ້ຍື່ນຄຳຮ້ອງຕໍ່ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫລື ຕໍ່ສານ.

**ມາດຕາ 42. ການເຂົ້າຮ່ວມທຶນຂອງທະນາຄານທຸລະກິດ**

ທະນາຄານທຸລະກິດມີສິດລົງທຶນຮ່ວມນຳຫົວໜ່ວຍທຸລະກິດອື່ນໄດ້ແຕ່ບໍ່ໃຫ້ເກີນສິບສ່ວນຮ້ອຍຂອງທຶນຈົດທະບຽນຂອງວິສາຫະກິດທີ່ຕົນເຂົ້າຮ່ວມນັ້ນ.

## ໝວດທີ V
## ການລາຍງານ ແລະ ການກວດກາ

**ມາດຕາ 43. ການກວດກາຂອງທະນາຄານ ແຫ່ງ ສປປ ລາວ**

ທຸກການເຄື່ອນໄຫວຂອງທະນາຄານທຸລະກິດຕ້ອງຢູ່ພາຍໃຕ້ການດູແລ ແລະ ການກວດກາຂອງທະນາຄານ ແຫ່ງ ສປປ ລາວ.

ທະນາຄານທຸລະກິດຕ້ອງປະຕິບັດລະບຽບ ແລະ ອັດຕາສ່ວນຕ່າງໆ ທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກເປັນຕົ້ນ:

- ການສ້າງຄັງສະສົມແຮໄວ້;
- ອັດຕາສ່ວນການແຮເງິນສົດ;
- ການຝາກເງິນບັງຄັບຢູ່ທະນາຄານ ແຫ່ງ ສປປ ລາວ;
- ອັດຕາສົມສ່ວນເງິນກູ້-ເງິນຝາກ;
- ການປະຕິບັດລະບຽບປ້ອງກັນຄວາມສ່ຽງຕໍ່ການລົ້ມລະລາຍຂອງທະນາຄານທຸລະກິດ;
- ການປະຕິບັດລະບຽບຄຸ້ມຄອງເງິນຕາຕ່າງປະເທດ ແລະ ອື່ນໆ.

ທະນາຄານທຸລະກິດມີໜ້າທີ່ລາຍງານໃຫ້ແກ່ທະນາຄານ ແຫ່ງ ສປປ ລາວ ເປັນແຕ່ລະເດືອນ ຫລື ຕາມຄວາມຮຽກຮ້ອງຕ້ອງການຂອງທະນາຄານ ແຫ່ງ ສປປ ລາວ ກ່ຽວກັບໃບສະຫລຸບຊັບສົມບັດ, ໃບດຸ່ນດ່ຽງ, ອັດຕາສ່ວນຕ່າງໆ ແລະ ໃບລາຍງານອື່ນໆ. ການລາຍງານດັ່ງກ່າວຕ້ອງໃຫ້ຖືກຕ້ອງຕາມມາດຕະຖານທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກ.

ທະນາຄານ ແຫ່ງ ສປປ ລາວ ມີສິດລົງກວດກາກັບທີ່ເມື່ອເຫັນວ່າມີຄວາມຈຳເປັນ. ທະນາຄານທຸລະກິດມີໜ້າທີ່ລາຍງານໃຫ້ແກ່ທະນາຄານ ແຫ່ງ ສປປ ລາວ ຖ້າຫາກມີການປ່ຽນແປງໃດໜຶ່ງເກີດຂຶ້ນກ່ຽວກັບທຶນຈົດທະບຽນ, ກ່ຽວກັບປະທານສະພາບໍລິຫານ ຫລື ກ່ຽວກັບຜູ້ອຳນວຍການ.

**ມາດຕາ 44. ການກວດກາພາຍໃນ**

ທຸກການໃຊ້ຈ່າຍ ແລະ ການດຳເນີນວຽກງານປະຈຳວັນຂອງທະນາຄານທຸລະກິດຕ້ອງມີການກວດກາ. ການກວດກາດັ່ງກ່າວມີສອງປະເພດຄື: ການກວດກາພາຍໃນ ແລະ ການກວດກາພາຍນອກ.

ການກວດກາພາຍໃນແມ່ນການກວດກາໂດຍຜູ້ກວດກາພາຍໃນທີ່ປະຈຳການຢູ່ທະນາຄານທຸລະກິດນັ້ນເອງ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 32 ຂອງລັດຖະບັນຍັດສະບັບນີ້.

ການກວດກາພາຍໃນ ແມ່ນການກວດກາຄວາມຖືກຕ້ອງການໃຊ້ຈ່າຍ ແລະ ການດໍາເນີນວຽກງານປະຈໍາວັນຂອງທະນາຄານທຸລະກິດ. ການກວດກາດັ່ງກ່າວແມ່ນດໍາເນີນປະຈໍາວັນ, ປະຈໍາເດືອນ, ປະຈໍາງວດ ແລະ ປະຈໍາປີ. ການກວດກາສາມາດດໍາເນີນກ່ອນ ຫລື ຫລັງການສັ່ງຈ່າຍກໍໄດ້.

**ມາດຕາ 45 ໃໝ່. ການກວດກາພາຍນອກ**

ການກວດກາພາຍນອກຕໍ່ທະນາຄານາຄານທຸລະກິດປະກອບດ້ວຍການກວດສອບບັນຊີ ຈາກພາຍນອກ ແລະ ການກວດກາຈາກທະນາຄານແຫ່ງ ສປປ ລາວ.

ການກວດສອບບັນຊີຈາກພາຍນອກ ແມ່ນດໍາເນີນໂດຍຜູ້ກວດສອບບັນຊີຈາກພາຍນອກ ຊຶ່ງຖືກຮັບຮອງເອົາໂດຍກອງປະຊຸມໃຫຍ່ຜູ້ຖືຮຸ້ນ ຕາມການສະເໜີຂອງສະພາບໍລິຫານ. ຜູ້ກວດສອບບັນຊີຈາກພາຍນອກ ຕ້ອງເລືອກເອົາໃນບັນຊີລາຍຊື່ ຜູ້ທີ່ໄດ້ຈົດທະບຽນນໍາອົງການຈັດຕັ້ງວິຊາຊີບການບັນຊີ ຊຶ່ງມີຄຸນວຸດທິໃນການກວດສອບທາງດ້ານການທະນາຄານ. ການກວດສອບບັນຊີຈາກພາຍນອກແມ່ນດໍາເນີນປີລະຄັ້ງ.

ພາຍຫລັງການກວດສອບແລ້ວ ຕ້ອງເຮັດບົດສະຫລຸບຜົນຂອງການກວດສອບເພື່ອລາຍງານໃຫ້ອົງການທີ່ສັ່ງກວດສອບ ແລະ ທະນາຄານແຫ່ງ ສປປ ລາວ ຊາບ.

ການກວດກາຈາກທະນາຄານແຫ່ງ ສປປ ລາວ ດໍາເນີນໄດ້ທຸກເວລາ ຖ້າຫາກເຫັນວ່າມີຄວາມຈໍາເປັນ.

**ມາດຕາ 46. ການເປີດເຜີຍຖານະການເງິນຂອງທະນາຄານທຸລະກິດ**

ໃນທຸກໆທ້າຍປີບໍ່ໃຫ້ເກີນວັນທີ 31 ມີນາຂອງປີຕໍ່ມາ ທະນາຄານທຸລະກິດຕ້ອງພິມເຜີຍແຜ່ຖານະຊັບສິນ ແລະ ໜີ້ສິນຕົວຈິງຂອງຕົນໃຫ້ຄົບຖ້ວນຕາມແບບພິມທີ່ທະນາຄານ ແຫ່ງ ສປປ ລາວ ກໍານົດໄວ້ ແລະ ຕ້ອງສົ່ງໃຫ້ທະນາຄານ ແຫ່ງ ສປປ ລາວ ໜຶ່ງສະບັບ, ນອກນັ້ນກໍໃຫ້ຕິດປະກາດໄວ້ບ່ອນເປີດເຜີຍທີ່ມະຫາຊົນເຫັນໄດ້ງ່າຍ, ຢູ່ສໍານັກງານໃຫຍ່ທະນາຄານທຸລະກິດທີ່ກ່ຽວຂ້ອງນັ້ນ ແລະ ໃຫ້ລົງໜັງສືພິມລາຍວັນ ຫລື ວາລະສານທຸລະກິດທີ່ສໍາຄັນໃດໜຶ່ງກໍໄດ້ຢ່າງໜ້ອຍໜຶ່ງເທື່ອເວັ້ນເສຍແຕ່ໃນກໍລະນີທີ່ທະນາຄານ ແຫ່ງ ສປປ ລາວ ຫາກກໍານົດໄວ້ຢ່າງອື່ນ.

ປີການບັນຊີຂອງທະນາຄານທຸລະກິດແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດລົງໃນວັນທີ 31 ທັນວາຂອງແຕ່ລະປີ.

## ໝວດທີVI
## ລາຍຮັບ, ລາຍຈ່າຍ, ກໍາໄລ ແລະ ການຂາດທຶນ

ມາດຕາ 47. ລາຍຮັບ-ລາຍຈ່າຍ ຂອງທະນາຄານທຸລະກິດ

ລາຍຮັບຂອງທະນາຄານທຸລະກິດມີດັ່ງນີ້:

- ລາຍຮັບດອກເບ້ຍ;
- ລາຍຮັບຄ່າທໍານຽມບໍລິການ;
- ລາຍຮັບອື່ນໆ.

ລາຍຈ່າຍຂອງທະນາຄານທຸລະກິດມີດັ່ງນີ້:

- ລາຍຈ່າຍດອກເບ້ຍ;
- ລາຍຈ່າຍບໍລິຫານທຸລະກິດ ແລະ ວິຊາການ;
- ລາຍຈ່າຍຄ່າເຊື່ອມມູນຄ່າຊັບສິນ ແລະ ຄ່າຫລຸ້ຍຫ້ຽນຊັບສິນບັດຄົງທີ່;
- ລາຍຈ່າຍເງິນແຮເພື່ອປະກັນຄວາມສ່ຽງ;
- ລາຍຈ່າຍອື່ນໆ.

ສະພາບໍລິຫານເປັນຜູ້ກໍານົດລາຍຈ່າຍບໍລິຫານທຸລະກິດ ແລະ ລາຍຈ່າຍວິຊາການອື່ນໆ ເພື່ອໃຫ້ແທດເໝາະກັບການເຄື່ອນໄຫວທຸລະກິດຕົວຈິງ ໂດຍສອດຄ່ອງກັບລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ. ສ່ວນການຫັກຄ່າຫລຸ້ຍຫ້ຽນຊັບສິນບັດຄົງທີ່ນັ້ນ ໃຫ້ປະຕິບັດຕາມກົດໝາຍສ່ວຍສາອາກອນ.

ມາດຕາ 48 ໃໝ່. ກໍາໄລຂອງທະນາຄານທຸລະກິດ

ກໍາໄລລວມປະຈໍາປີຂອງທະນາຄານທຸລະກິດ ແມ່ນຈໍານວນຜິດດ່ຽງລະຫວ່າງລາຍຮັບໃນປີ ແລະ ລາຍຈ່າຍໃນປີ. ກໍາໄລສຸດທິແມ່ນກໍາໄລພາຍຫລັງຫັກຄ່າອາກອນກໍາໄລໃຫ້ລັດແລ້ວ.

ກໍາໄລສຸດທິໃຫ້ແບ່ງປັນດັ່ງນີ້:

- ສ້າງຄັງສະສົມຕາມລະບຽບການເພື່ອທົດແທນການຂາດທຶນ ຈາກການເຄື່ອນໄຫວທຸລະກິດຂອງທະນາຄານ;
- ສ້າງຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆທີ່ສະພາບໍລິຫານເຫັນວ່າມີຄວາມຈໍາເປັນ;
- ສ່ວນເຫລືອນັ້ນຈຶ່ງແບ່ງປັນໃຫ້ຜູ້ຖືຮຸ້ນຕາມການຕົກລົງຂອງສະພາບໍລິຫານ.

ສະພາບໍລິຫານຂອງທະນາຄານທຸລະກິດ ເປັນຜູ້ຕົກລົງອັດຕາສ່ວນຈໍານວນເງິນທີ່ຈະສ້າງເປັນຄັງດັ່ງກ່າວ ແຕ່ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຊາບ.

ມາດຕາ 49 ໃໝ່. ການຂາດທຶນ ແລະການຟື້ນຟູ

ໃນກໍລະນີທີ່ດໍາເນີນທຸລະກິດຂາດທຶນ ໃຫ້ທະນາຄານທຸລະກິດນໍາໃຊ້ເງິນໃນຄັງສະສົມ ຕາມລະບຽບການຕາມການຕົກລົງຂອງສະພາບໍລິຫານ ຫລື ໃນກໍລະນີທີ່ເງິນໃນຄັງສະສົມຫາກບໍ່ພຽງພໍເພື່ອທົດແທນການຂາດທຶນ ໃຫ້ເພີ່ມທຶນຮຸ້ນຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ໂດຍການສະເໜີຂອງສະພາບໍລິຫານ.

ຜູ້ຝາກເງິນຢູ່ທະນາຄານທີ່ລົ້ມລະລາຍໃດໜຶ່ງ ສາມາດຮັບເງິນທົດແທນຄືນ ຈາກກອງທຶນປົກປ້ອງຜູ້ຝາກເງິນຕາມລະບຽບການຂອງກອງທຶນດັ່ງກ່າວ.

ຖ້າເຫັນວ່າການເຄື່ອນໄຫວຂອງທະນາຄານຄານທຸລະກິດ ຫາກພົບຄວາມຫຍຸ້ງຍາກ ເປັນຕົ້ນແມ່ນຄວາມຫຍຸ້ງຍາກທາງດ້ານການເງິນທະນາຄານທຸລະກິດນັ້ນ, ເຈົ້າໜີ້ ຫລື ຜູ້ຝາກເງິນສາມາດສະເໜີໃຫ້ທະນາຄານແຫ່ງ ສປປ ລາວ ເຂົ້າມາຄວບຄຸມກິດຈະການຂອງທະນາຄານທຸລະກິດດັ່ງກ່າວ ເພື່ອແນໃສ່ຊ່ວຍແກ້ໄຂຂໍ້ຫຍຸ້ງຫຍາກທາງດ້ານການເງິນນັ້ນ.

ໃນກໍລະນີທີ່ເຫັນວ່າທະນາຄານທຸລະກິດຫາກຂາດຄວາມໝັ້ນຄົງ, ມີຄວາມສ່ຽງສູງທີ່ອາດຈະສ້າງຄວາມເສຍຫາຍອັນໃຫຍ່ຫລວງ ແກ່ຜູ້ຝາກເງິນຫລືເຈົ້າໜີ້ ຫລືອາດຈະເຮັດໃຫ້ລະບົບເງິນຕາຂອງຊາດຖືກກະທົບກະເທືອນຢ່າງຮ້າຍແຮງນັ້ນ ທະນາຄານແຫ່ງ ສປປ ລາວ ມີສິດເຂົ້າໄປຄວບຄຸມກິດຈະການ ຂອງທະນາຄານທຸລະກິດດັ່ງກ່າວຕາມໜ້າທີ່ຂອງຕົນ.

ໃນກໍລະນີທີ່ທະນາຄານທຸລະກິດຖືກລົ້ມລະລາຍຕາມຄຳຕັດສິນຂອງສານ ການຊຳລະສະສາງ ໃຫ້ປະຕິບັດຕາມມາດຕາ 15, 16, 28, 38, 39, 40, 41, 42, 43, 44, 45 ແລະ 46 ຂອງກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 50. ການປະເມີນມູນຄ່າເງິນຕາຕ່າງປະເທດ**

ຖານະເງິນຕາຕ່າງປະເທດສຸດທິທັງໝົດ ທີ່ທະນາຄານທຸລະກິດມີຢູ່ນັ້ນ ຕ້ອງໄດ້ປະເມີນລາຄາ ຫລືການົດຄ່າຄືນໃໝ່ ເມື່ອຮອດທ້າຍເດືອນ. ຈຳນວນຜົດດ່ຽງຂາດທຶນລາຄາຈາກການຊື້-ຂາຍຕົວຈິງ ຫລື ສ່ວນທີ່ຍັງບໍ່ທັນໄດ້ຊື້-ຂາຍກໍຕາມ ໃຫ້ທະນາຄານຈົດອອກເປັນລາຍຈ່າຍ, ສ່ວນຈຳນວນຜົດດ່ຽງເພີ່ມຂຶ້ນຂອງລາຄາທີ່ໄດ້ຮັບຈາກການຊື້-ຂາຍຕົວຈິງ ຫລື ຈຳນວນທີ່ຍັງບໍ່ທັນໄດ້ຊື້-ຂາຍນັ້ນໃຫ້ຈົດເຂົ້າເປັນລາຍຮັບຂອງທະນາຄານ.

## ໝວດທີVII
## ການຍຸບເລີກທະນາຄານທຸລະກິດ

**ມາດຕາ 51. ການຍຸບເລີກ**

ທະນາຄານທຸລະກິດຈະຖືກຍຸບເລີກ:

- ດ້ວຍຄວາມສະມັກໃຈຂອງຜູ້ຖືຮຸ້ນ;
- ຍ້ອນມີການຂາດທຶນ ທີ່ບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້;
- ຕາມຄຳສັ່ງຂອງທະນາຄານແຫ່ງ ສປປ ລາວ ຫລື ຕາມຄຳສັ່ງຂອງສານປະຊາຊົນ;
- ດ້ວຍການຂາຍ ຫລື ໂອນກິດຈະການໄປໃຫ້ຄົນອື່ນ;
- ຍ້ອນການລົ້ມລະລາຍ.

**ມາດຕາ 52. ການປະກາດຍຸບເລີກ**

ການຍຸບເລີກຂອງທະນາຄານທຸລະກິດ ຈະຢູ່ໃນກໍລະນີໃດກໍ່ຕາມ ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ປະກາດໃຫ້ມວນຊົນຊາບ ສ່ວນການຍຸບເລີກທີ່ເນື່ອງມາຈາກການລົ້ມລະລາຍຂອງທະນາຄານທຸລະກິດນັ້ນ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ.

## ພາກທີ III

## ທະນາຄານທຸລະກິດຂອງລັດ

**ມາດຕາ 53. ການສ້າງຕັ້ງທະນາຄານທຸລະກິດຂອງລັດ**

ທະນາຄານທຸລະກິດຂອງລັດແມ່ນຫົວໜ່ວຍທຸລະກິດ ຊຶ່ງລັດເປັນຜູ້ສ້າງຕັ້ງ ແລະ ລົງທຶນແຕ່ຜູ້ດຽວ ເອີ້ນວ່າ ທະນາຄານລັດວິສາຫະກິດ ຫລື ຮ່ວມທຶນກັບພາກສ່ວນອື່ນ ໂດຍລັດມີທຶນແຕ່ຫ້າສິບເອັດສ່ວນຮ້ອຍຂຶ້ນໄປ ເອີ້ນວ່າທະນາຄານລັດວິສາຫະກິດປະສົມ.

ກະຊວງການເງິນເປັນຜູ້ປະສານສົມທົບກັບທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າ ແລ້ວ ນໍາສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຕົກລົງ ກ່ຽວກັບການສ້າງຕັ້ງທະນາຄານທຸລະກິດຂອງລັດ. ພາຍຫລັງທີ່ໄດ້ຮັບຄວາມເຫັນດີຈາກລັດຖະບານ ແລະ ໄດ້ຮັບການອະນຸມັດສ້າງຕັ້ງຈາກທະນາຄານແຫ່ງ ສປປ ລາວ ແລ້ວ ໃຫ້ທະນາຄານດັ່ງກ່າວຂຶ້ນທະບຽນນໍາຂະແໜງການຄ້າ ແລະ ຈົດທະບຽນອາກອນນໍາຂະແໜງການເງິນ.

**ມາດຕາ 54. ຮຸ້ນຂອງທະນາຄານລັດວິສາກິດປະສົມ**

ຮຸ້ນຂອງລັດວິສາຫະກິດປະສົມມີສອງປະເພດຄື:

- ຮຸ້ນຂອງລັດ ຊຶ່ງສາມາດໂອນກໍາມະສິດໄດ້ຕາມຄໍາຕົກລົງຂອງລັດຖະບານ;
- ຮຸ້ນຂອງເອກະຊົນ ໃຫ້ປະຕິບັດຄືກັນກັບຮຸ້ນຂອງທະນາຄານທຸລະກິດເອກະຊົນ.

ໃບຮຸ້ນຂອງທະນາຄານລັດວິສາຫະກິດປະສົມສາມາດປ່ຽນມືໄດ້.

**ມາດຕາ 55 ໃໝ່. ສິດ ແລະໜ້າທີ່ຂອງທະນາຄານທຸລະກິດຂອງລັດ ແລະ ລັດຮຸ້ນສ່ວນ**

ສິດແລະ ໜ້າທີ່ຂອງທະນາຄານທຸລະກິດຂອງລັດ ແລະ ລັດຮຸ້ນສ່ວນ ໃຫ້ປະຕິບັດ ຕາມມາດຕາ 10 ຂອງລັດຖະບັນຍັດສະບັບນີ້, ສ່ວນການຈັດຕັ້ງຂອງທະນາຄານທຸລະກິດລັດຮຸ້ນສ່ວນນັ້ນ ໃຫ້ປະຕິບັດຕາມມາດຕາ 17 ຫາມາດຕາ 32 ຂອງລັດຖະບັນຍັດສະບັບນີ້.

**ມາດຕາ 56 ໃໝ່. ການດໍາເນີນທຸລະກິດຂອງທະນາຄານທຸລະກິດຂອງລັດ ແລະ ລັດຮຸ້ນສ່ວນ**

ການດໍາເນີນທຸລະກິດຂອງທະນາຄານທຸລະກິດຂອງລັດ ແລະ ລັດຮຸ້ນສ່ວນ ໃຫ້ປະຕິບັດຕາມມາດຕາ 33 ຫາມາດຕາ 42 ຂອງລັດຖະບັນຍັດສະບັບນີ້.

**ມາດຕາ 57. ການຈັດຕັ້ງທະນາຄານທຸລະກິດຂອງລັດ**

ທະນາຄານລັດວິສາຫະກິດປະກອບດ້ວຍສະພາບໍລິຫານ, ຜູ້ອຳນວຍການ ແລະ ຜູ້ກວດກາ.

ສຳລັບທະນາຄານລັດວິສາຫະກິດປະສົມນັ້ນ ຍັງປະກອບດ້ວຍກອງປະຊຸມຜູ້ຖືຮຸ້ນຕື່ມອີກ.

**ມາດຕາ 58 ໃໝ່. ສະພາບໍລິຫານ**

ສະພາບໍລິຫານຂອງທະນາຄານລັດວິສາຫະກິດ ປະກອບດ້ວຍສະມາຊິກແຕ່ຫ້າຫາເຈັດຄົນ, ໃນນັ້ນມີ:

- ປະທານ ຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງການເງິນຕາມຄວາມເຫັນດີຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ;

- ຮອງປະທານ ຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງການເງິນຕາມການສະເໜີ ຂອງຜູ້ວ່າການທະນາຄານ ແຫ່ງ ສປປລາວ;

- ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນໜຶ່ງຄົນ ຖືກແຕ່ງຕັ້ງ ຫລືປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງການເງິນ ຕາມການສະເໜີຂອງກອງປະຊຸມພະນັກງານ, ກຳມະກອນ;

- ຜູ້ຊົງຄຸນວຸດທິ ທີ່ມີປະສົບປະການທາງດ້ານການທະນາຄານ, ການເງິນ ຫລືການບໍລິຫານທຸລະກິດ ຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງການເງິນ.

ອາຍຸການຂອງສະມາຊິກສະພາບໍລິຫານ ໃຫ້ປະຕິບັດຕາມມາດຕາ 19 ຂອງລັດຖະບັນຍັດສະບັບນີ້.

ສຳລັບທະນາຄານລັດວິສາຫະກິດປະສົມນັ້ນ ໃຫ້ປະຕິບັດຕາມທະນາຄານລັດວິສາຫະກິດເວັ້ນເສຍແຕ່ຮອງປະທານສະພາບໍລິຫານໜຶ່ງຄົນ ຊຶ່ງເປັນຕົວແທນຂອງພາກເອກະຊົນຜູ້ຖືຮຸ້ນ ຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງ ໂດຍລັດຖະມົນຕີວ່າການກະຊວງການເງິນ ຕາມການສະເໜີຂອງພາກສ່ວນເອກະຊົນຜູ້ຖືຮຸ້ນ.

**ມາດຕາ 59 ໃໝ່. ສິດ ແລະໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານທະນາຄານທຸລະກິດຂອງລັດ ມີສິດ ແລະ ໜ້າທີ່ດັ່ງນີ້:

- ຮັບຮອງເອົານະໂຍບາຍການດຳເນີນທຸລະກິດ ແລະ ການເຄື່ອນໄຫວຂອງທະນາຄານ;

- ຮັບຮອງເອົາການລາຍງານຂອງຜູ້ອຳນວຍການກ່ຽວກັບການເຄື່ອນໄຫວ ແລະ ການສະຫລຸບບັນຊີປະຈຳປີ ພ້ອມທັງທິດທາງແຜນການສຳລັບປີຕໍ່ໄປ ເພື່ອລາຍງານຕໍ່ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ;

- ຮັບຮອງເອົາລະບຽບການຕ່າງໆ ກ່ຽວກັບການດຳເນີນທຸລະກິດຂອງທະນາຄານຂອງລັດ, ກຳນົດຂອບເຂດສິດຂອງຜູ້ອຳນວຍການໃນການຕັດສິນບັນຫາການປ່ອຍສິນເຊື່ອ, ການຄ້ຳປະກັນ, ການສັ່ງຈ່າຍ, ການຮັບຝາກເງິນ, ການກູ້ຢືມທຶນດ້ວຍຮູບການຕ່າງໆ ແລະ ການເຄື່ອນໄຫວອື່ນໆ ໂດຍສອດຄ່ອງກັບລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;

- ກຳນົດເບ້ຍປະຊຸມຂອງປະທານ, ສະມາຊິກສະພາບໍລິຫານ, ເງິນເດືອນຂອງຄະນະອຳນວຍການ ແລະ ພະນັກງານ, ຄືນງານ ໂດຍສອດຄ່ອງກັບລະບຽບທີ່ກະຊວງການເງິນວາງອອກ;

- ສະເໜີໃຫ້ລັດຖະມົນຕີວ່າການກະຊວງການເງິນແຕ່ງຕັ້ງ ຫລື ປົດຕຳແໜ່ງຜູ້ອຳນວຍການ, ຮອງຜູ້ອຳນວຍການ ແລະ ຫົວໜ້າສາຂາ;

- ຕົກລົງແບ່ງປັນກຳໄລ ແລະ ການສ້າງຄັງຕ່າງໆໂດຍສອດຄ່ອງກັບກົດໝາຍວ່າດ້ວຍທຸລະກິດ ແລະ ລະບຽບການທີ່ກະຊວງການເງິນວາງອອກ;

- ຮັບຮອງເອົາການແຕ່ງຕັ້ງຫົວໜ້າການບັນຊີ ບົນພື້ນຖານການສະເໜີຂອງຜູ້ອຳນວຍການທະນາຄານລັດວິສາຫະກິດ;

- ສະເໜີເອົາຜູ້ກວດສອບບັນຊີ;

- ສະເໜີກ່ຽວກັບການປ່ຽນແປງທຶນ ຫລື ກົດລະບຽບຂອງທະນາຄານລັດວິສາຫະກິດ.

ສຳລັບທະນາຄານລັດວິສາຫະກິດປະສົມນັ້ນ ສະພາບໍລິຫານເປັນຜູ້ແຕ່ງຕັ້ງ ຫລື ປົດຕຳແໜ່ງຜູ້ອຳນວຍການຕາມການສະເໜີຂອງກອງປະຊຸມໃຫຍ່ຜູ້ຖືຮຸ້ນ.

**ມາດຕາ 60. ກອງປະຊຸມສະພາບໍລິຫານ**

ລະບຽບຮຽກໂຮມ ແລະ ດຳເນີນກອງປະຊຸມສະພາບໍລິຫານຂອງທະນາຄານທຸລະກິດຂອງລັດ ໃຫ້ປະຕິບັດຕາມມາດຕາ 21 ຂອງລັດຖະບັນຍັດສະບັບນີ້

**ມາດຕາ 61. ກອງປະຊຸມໃຫຍ່ຜູ້ຖືຮຸ້ນຂອງທະນາຄານລັດວິສາຫະກິດປະສົມ**

ກອງປະຊຸມໃຫຍ່ຜູ້ຖືຮຸ້ນຂອງທະນາຄານລັດວິສາຫະກິດປະສົມ ແມ່ນການຈັດຕັ້ງສູງສຸດຂອງທະນາຄານລັດວິສາຫະກິດປະສົມມີສິດຕົກລົງບັນຫາສຳຄັນຂອງທະນາຄານ.

ລະບຽບການຮຽກໂຮມ ແລະ ການດຳເນີນກອງປະຊຸມ ພ້ອມທັງສິດ ແລະ ໜ້າທີ່ຂອງກອງປະຊຸມໃຫຍ່ຜູ້ຖືຮຸ້ນ ໃຫ້ປະຕິບັດຕາມມາດຕາ 27, 28, 29, 30 ແລະ 31 ຂອງລັດຖະບັນຍັດສະບັບນີ້.

**ມາດຕາ 62. ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ**

ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການທະນາຄານທຸລະກິດຂອງລັດແມ່ນຄືກັນກັບສິດ ແລະ ໜ້າທີ່ຂອງຜູ້ອຳນວຍການຂອງທະນາຄານທຸລະກິດເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງລັດຖະບັນຍັດສະບັບນີ້

**ມາດຕາ63 ໃໝ່. ຜູ້ກວດກາພາຍໃນຂອງທະນາຄານທຸລະກິດຂອງລັດແລະ ລັດຮຸ້ນສ່ວນ**

ຜູ້ກວດກາພາຍໃນທະນາຄານລັດວິສາຫະກິດ, ທະນາຄານລັດວິສາຫະກິດປະສົມ ແລະ ລັດຮຸ້ນສ່ວນ ໃຫ້ປະຕິບັດຕາມມາດຕາ 32 ຂອງລັດຖະບັນຍັດສະບັບນີ້.

**ມາດຕາ 64 ໃໝ່. ຜູ້ກວດກາພາຍນອກຂອງທະນາຄານທຸລະກິດຂອງລັດ ແລະລັດຮຸ້ນສ່ວນ**

ການກວດສອບບັນຊີຈາກພາຍນອກ ຕໍ່ທະນາຄານທຸລະກິດຂອງລັດ ແລະລັດຮຸ້ນສ່ວນໃຫ້ປະຕິບັດຕາມມາດຕາ 45 ຂອງລັດຖະບັນຍັດສະບັບນີ້. ນອກຈາກນີ້ລັດຖະມົນຕີວ່າການກະຊວງການເງິນມີສິດສັ່ງໃຫ້ກວດສອບທະນາຄານທຸລະກິດຂອງລັດ ແລະ ເປັນຜູ້ຮັບຮອງເອົາຜູ້ກວດສອບບັນຊີຈາກພາຍນອກ.

**ມາດຕາ 65. ການກູ້ຢືມເງິນຂອງວິສາຫະກິດຂອງລັດ**

ການກູ້ຢືມເງິນນຳທະນາຄານຕ້ອງມີຫລັກຊັບຄ້ຳປະກັນ. ສຳລັບລັດວິສາຫະກິດ ຫລື ລັດວິສາຫະກິດປະສົມ ທີ່ກູ້ຢືມເງິນນຳທະນາຄານທຸລະກິດ ແມ່ນກະຊວງການເງິນເປັນຜູ້ຄ້ຳປະກັນ.

## ພາກທີ IV
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 66 ໃໝ່. ການລະເມີດຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ທີ່ໄດ້ລະເມີດລັດຖະບັນຍັດສະບັບນີ້ ຈະ ຖືກປະຕິບັດຕາມມາດຕະການດັ່ງນີ້:

1. ໃນກໍລະນີທີ່ມີການກະທຳຜິດສະຖານເບົາ ຫລື ກໍ່ຄວາມເສຍຫາຍພຽງເລັກ ໜ້ອຍ ຈະຖືກກ່າວເຕືອນຈາກທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ;

2. ພາຍຫລັງໄດ້ກ່າວເຕືອນແລ້ວ ຫາກຍັງສືບຕໍ່ລະເມີດ ຜູ້ບໍລິຫານຈະຖືກຮຽກມາກ່າວເຕືອນ ແລະ ປັບໃໝຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ວາງອອກ;

3. ໃນກໍລະນີທີ່ໄດ້ກ່າວເຕືອນ ແລະ ປັບໃໝແລ້ວ ຫາກຍັງບໍ່ເຊົາດທລາບ ຈະຖືກປັບໃໝສອງເທົ່າຂອງການປັບໃໝຄັ້ງທີໜຶ່ງ ຈາກທະນາຄານແຫ່ງ ສປປ ລາວ ແລ້ວສັ່ງໃຫ້ສະພາບໍລິຫານທະນາຄານທຸລະກິດ ທີ່ກ່ຽວຂ້ອງປົດຜູ້ບໍລິຫານ. ສ່ວນທະນາຄານລັດວິສາຫະກິດ ຫລື ລັດວິສາຫະກິດປະສົມ ໃຫ້ສະພາບໍລິຫານ ສະເໜີລັດຖະມົນຕີວ່າການກະຊວງການເງິນ ປົດຕຳແໜ່ງຜູ້ບໍລິຫານ;

4. ໃນກໍລະນີ ທີ່ມີການລະເມີດລະບຽບກົດໝາຍຢ່າງຮ້າຍແຮງ ສະມາຊິກສະພາບໍລິຫານ ແລະ ຜູ້ບໍລິຫານອື່ນໆ ຍັງຈະຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 67 ໃໝ່. ການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ**

ທະນາຄານທຸລະກິດ ຫລື ບຸກຄົນໃດຫາກສະໜອງຂໍ້ມູນຂ່າວສານ ທີ່ບໍ່ກົງກັບຄວາມເປັນຈິງໃຫ້ຄະນະກວດກາ ຫລື ທະນາຄານແຫ່ງ ສປປ ລາວ ໂດຍເຈດຕະນາ ຫລື ບໍ່ເຈດຕະນາ ຊຶ່ງພາໃຫ້ເກີດຄວາມເສຍຫາຍແກ່ວຽກງານກວດກາ, ຄວາມໝັ້ນຄົງຂອງລະບົບທະນາຄານ ຫລືເສດຖະກິດແຫ່ງຊາດ ຈະຖືກກ່າວເຕືອນ, ປັບໃໝ, ປະຕິບັດວິໄນທາງດ້ານບໍລິຫານ ຫລື ຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 68 ໃໝ່. ການດຳເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນ ຫລື ນິຕິບຸກຄົນໃດຫາກດຳເນີນທຸລະກິດດ້ານການທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ ແລະ ດຳເນີນຄະດີຕາມກົດໝາຍ.

**ມາດຕາ 69 ໃໝ່. ການເປີດເຜີຍຄວາມລັບ**

ພະນັກງານຂອງທະນາຄານທຸລະກິດ ຫລື ຜູ້ທີ່ກ່ຽວຂ້ອງໃນການຮັກສາຄວາມລັບ ຫາກໄດ້ເປີດເຜີຍຂໍ້ມູນຂ່າວສານທີ່ເປັນຄວາມລັບຂອງທະນາຄານທຸລະກິດ ໂດຍບໍ່ໄດ້ມີຄຳສັ່ງຈາກສານ ຫລື ບໍ່ໄດ້ຮັບອະນຸຍາດຈາກສະພາບໍລິຫານ ຈະຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 70 ໃໝ່. ການທຳລາຍຂໍ້ມູນ**

ບຸກຄົນໃດຫາກທຳລາຍຂໍ້ມູນຂອງທະນາຄານທຸລະກິດ ຈະຖືກດຳເນີນຄະດີຕາມມາດຕາ 149 ຂອງກົດໝາຍອາຍາ.

**ມາດຕາ 71 ໃໝ່. ການລະເມີດຂອງລູກຄ້າ**

ລູກຄ້າຄົນໃດ ຫາກລະເມີດລະບຽບການຂອງທະນາຄານທຸລະກິດ ໃນການຝາກເງິນ, ການກູ້ຢືມ, ການໂອນເງິນ ແລະ ການບໍລິການອື່ນໆ ຈະຖືກປະຕິບັດມາດຕະການດັ່ງນີ້:

1. ໃນກໍລະນີທີ່ມີການກະທຳຜິດສະຖານເບົາ ຫລື ກໍ່ຄວາມເສຍຫາຍພຽງເລັກໜ້ອຍຈະຖືກກ່າວເຕືອນຈາກທະນາຄານທຸລະກິດຢ່າງເປັນລາຍລັກອັກສອນ;

2. ພາຍຫລັງກ່າວເຕືອນແລ້ວຍັງສືບຕໍ່ລະເມີດຈະຖືກຮຽກມາກ່າວເຕືອນ ແລະ ປັບໃໝ ຕາມລະບຽບການຂອງທະນາຄານທຸລະກິດນັ້ນ;

3. ໃນກໍລະນີ ທີ່ໄດ້ກ່າວເຕືອນ ແລະ ປັບໃໝແລ້ວ ແຕ່ຍັງບໍ່ເຂັດຫລາບ ທະນາຄານທຸລະກິດຈະປັບໃໝສອງເທົ່າຂອງການປັບໃໝຄັ້ງທີໜຶ່ງ ແລະປະຕິບັດຕາມສັນຍາ ຫລື ປະຕິບັດຕາມລະບຽບການຂອງທະນາຄານທຸລະກິດ;

4. ໃນກໍລະນີທີ່ມີການລະເມີດຢ່າງຮ້າຍແຮງ ຫລື ກໍ່ຄວາມເສຍຫາຍຢ່າງຫລວງຫລາຍນັ້ນນອກຈາກຈະຖືກປັບໃໝຕາມລະບຽບການຂອງທະນາຄານທຸລະກິດ, ບັງຄັບໃຫ້ປະຕິບັດສັນຍາແລ້ວຍັງຈະຖືກດຳເນີນຄະດີຕາມກົດໝາຍອີກດ້ວຍ.

## ພາກທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 72. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ລັດຖະບັນຍັດສະບັບນີ້.

ມາດຕາ 73. ຜົນສັກສິດ .

ລັດຖະບັນຍັດສະບັບນີ້ປ່ຽນແທນບາງມາດຕາ ຂອງລັດຖະບັນຍັດ ສະບັບເລກທີ 01/ສປປ ລົງວັນທີ 11 ມີນາ 1997 ວ່າດ້ວຍທະນາຄານທຸລະກິດ. ຂໍ້ກຳນົດ ກົດລະບຽບທີ່ປະກາດໃຊ້ ໃນເມື່ອກ່ອນ ຊຶ່ງຂັດກັບລັດຖະບັນຍັດ ສະບັບນີ້ ລ້ວນແຕ່ຖືກຍົກເລີກ .

*ລັດຖະບັນຍັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ .*

ວຽງຈັນ, ວັນທີ 22 ມິຖຸນາ 2000 .

ປະທານປະເທດ ແຫ່ງ ສປປ ລາວ.



ຄຳໄຕ ສີພັນດອນ